# ວັດປ່າລາວວູດແລນດ໌

## Wat Pa Lao Woodland

P.O Box 822155 Vancouver, WA 98682 Tel: 360 601 3385


January 25, 2015

# ໃບແຈ້ງການ

**ຮຽນ :** ພີ່ນ້ອງຊາວພຸທທີ່ນັບຖື ແລະຮັກແພງ

**ເຣື່ອງ :** ຂ່າວຄວາມຄືບໜ້າ ໃນການສ້າງວັດໃໝ່ທີ່ເມືອງ ວູດແລນດ໌ ຣັຖວໍຊິງຕັນ

ພວກຂ້າພະເຈົ້າ ຄນະກັມມະການນຳພາໃນການສ້າງ ວັດປ່າລາວວູດແລນດ໌ ຂໍແຈ້ງຈຸດປະສົງຄ໌ ໃຫ້ພີ່ນ້ອງຊາວພຸທໄດ້ຮັບຊາບ ໂດຍທົ່ວເຖິງກັນວ່າ ພວກຂ້າພະເຈົ້າຫລິງເຫັນຄວາມຈຳເປັນ ທີ່ພີ່ນ້ອງໃນເຂດເມືອງແວນຄູເວີຣ໌ ແລະເຂດໃກ້ຄຽງທີ່ຕ້ອງການຢາກສ້າງວັດລາວ ທີ່ມີການຝຶກວິປັສນາກັມມະຖານ ຊຶ່ງເປັນທາງດຽວໃນສາສນາພຸທ ທີ່ຈະນຳພາຊາວພຸທໃຫ້ໄປສູ່ຄວາມສງົບຈິຕສງົບໃຈ ສ້າງໃຫ້ຄົນໄດ້ຜ່ອນຄາຍທາງດ້ານອາຣົມນ໌ ແລະແນວຄິດ ບໍ່ບຽດບຽນອິສສາຊຶ່ງກັນແລະກັນ.

ປັຈຈຸບັນ ພວກຂ້າພະເຈົ້າໄດ້ພົບພໍ້ສະຖານທີ່ແຫ່ງໜຶ່ງ ຕາມທີ່ຢູ່ດັ່ງນີ້ : 38702 NW Pacific Hwy, Woodland, WA 98674 ມີເນື້ອທີ່ ໑໕ ເອເກີຣ໌ ແລະປະຕິຣູປທີ່ດິນເປັນທີ່ຮຽບຮ້ອຍແລ້ວ, ສະຖານທີ່ແຫ່ງນີ້ພວກເຮົາເຫັນວ່າ ມີຄວາມເໝາະສົມທີ່ຈະສ້າງໃຫ້ເປັນວັດ, ເປັນສູນຍ໌ຝຶກວິປັສນາກັມມະຖານ, ເປັນສູນຍ໌ຝຶກອົບຮົມ ແລະເຜີຍແຜ່ທັມມະໄດ້ດີ ເພື່ອໃຫ້ຊາວພຸທຜູ້ທີ່ສົນໃຈໃນດ້ານນີ້ໄດ້ມີໂອກາສ ມີບ່ອນປະຕິບັຕທັມມ໌ຕາມຄວາມມຸ່ງມາທປາຖນາ ພ້ອມກັບເປັນສູນຍ໌ອົບຮົມ ແລະຝຶກເຢົາວະຊົນໃຫ້ເປັນຄົນດີຂອງສາສນາ, ຂອງສັງຄົມ, ຂອງຜູ້ປົກຄອງພໍ່ແມ່ ແລະຂອງອານາຄົຕດ້ວຍ.

ດັ່ງນັ້ນ, ທາງຄນະກັມມະການ ທີ່ຈັດຕັ້ງກັນຂຶ້ນມາເພື່ອນຳພາໃນການສ້າງ ວັດປ່າລາວວູດແລນດ໌ໃນເທື່ອນີ້ ຈຶ່ງຂໍແຈ້ງຂ່າວຄືບໜ້າໃຫ້ບັນດາທ່ານໄດ້ຊາບວ່າ ພວກຄນະໄດ້ຕົກລົງເຫັນດີຈະຊື້ສະຖານທີ່ແຫ່ງນີ້ແລ້ວ ແລະພວມປະກອບເອກສາຣ ພ້ອມສຳເນົາໃນການກູ້ຢືມເງິນຈາກທະນາຄາຣ ໃຫ້ຖືກກັບຣະບົບຂອງທາງການຢ່າງເປັນລາຍລັກອັກສອນ ແລະຫວັງຢ່າງຍິ່ງວ່າ ຄົງຈະໄດ້ຮັບຄຳຕອບ ຈາກທາງທະນາຄາຣໃນເວລາອັນບໍ່ດົນນີ້.

ສນັ້ນ, ພວກເຮົາຈຶ່ງມີຄວາມຈຳເປັນ ແລະຂໍຄວາມເຫັນໃຈຈາກບັນດາທ່ານຜູ້ມີໃຈບຸນຍ໌ ຊ່ອຍກັນເປັນເຈົ້າສັທທາ ບໍ່ວ່າຈະເປັນສະຕິປັນຍາ ເຫື່ອແຮງ ແລະທຶນຊັພຍ໌ ພວກເຮົາຖືວ່າເປັນການກຸສົລທັງນັ້ນ ເພາະທັງໝົດນີ້ຈະຊ່ອຍໃຫ້ພວກເຮົາ ໄດ້ພົບກັບຄວາມສຳເຣັຈໃນຈຸດປະສົງຄ໌ ຕາມເປົ້າໝາຍທີ່ທຸກທ່ານມີຄວາມຫວັງໄວ້ ວ່າຍາມໃດກໍຕ້ອງການຢາກໃຫ້ມີສະຖານທີ່ ມີວັດທີ່ຢູ່ໃກ້ຄຽງ ມີທີ່ເພິ່ງທາງໃຈໃນຍາມທີ່ຕ້ອງການຄວາມອົບອຸ່ນ. ນອກຈາກ ທີ່ກ່າວມາຂ້າງເທິງນີ້ແລ້ວ ພວກເຮົາຍັງຈະໄດ້ຊັພຍ໌ສິນເຫລົ່ານີ້ໄວ້ເປັນສົມບັຕຂອງສາສນາ ຂອງສັງຄົມລາວ ຂອງລູກຫລານໄດ້ສືບທອດຕໍ່ໄປໃນອານາຄົຕ ໂດຍບໍ່ມີການສິ້ນສຸດ.

ທ້າຍສຸດຂອງໃບແຈ້ງການສບັບນີ້, ທາງຄນະກັມມະການພວກເຮົາ ຫວັງຢ່າງຍິ່ງວ່າບັນດາທ່ານຜູ້ມີໃຈບຸນຍ໌ ຄົງສລະເຫື່ອແຮງປັຈໄຈຍ໌, ສລະເວລາໄປຮ່ວມ, ໄປເບິ່ງ ແລະໄປສ້າງວັດແຫ່ງນີ້ຕາມທີ່ກ່າວມາຂ້າງເທິງນີ້ ນຳພວກເຮົາດ້ວຍ.

***ດ້ວຍຄວາມເຄົາຣົພ ແລະນັບຖື,***

*ໄຊຍະສິທ ສົມມາພິລາວົງສ໌*

*ປະທານຄນະກັມມະການນຳພາການສ້າງ ວັດປ່າລາວ ເມືອງວູດແລນດ໌ ຣັຖວໍຊິງຕັນ*